ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ.....914...../ອຊ

ອຸດົມໄຊ, ວັນທີ 11.. ສິງຫາ 2023

# ຄໍາສັ່ງແນະນໍາ

# ວ່າດ້ວຍການຕ້ານ ແລະ ສະກັດກັ້ນການຄ້າມະນຸດ ຢູ່ແຂວງອຸດົມໄຊ

ເຖິງ: ສອງກອງບັນຊາການ ປກຊ-ປກສ ແຂວງ, ພະແນກການທີ່ກ່ຽວຂ້ອງ, ເຈົ້າເມືອງ 07 ເມືອງ, ອົງການປົກຄອງບ້ານ ແລະ ປະຊາຊົນບັນດາເຜົ່າ ທົ່ວແຂວງອຸດົມໄຊ.

- ອີງຕາມ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບເລກທີ 73/ສພຊ, ລົງວັນທີ 17 ທັນວາ 2015;
- ອີງຕາມ ດໍາລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຂອງຄະນະກໍາມະການຕ້ານການຄ້າມະນຸດ ສະບັບເລກທີ 245/ນຍ, ລົງວັນທີ 03 ກໍລະກົດ 2018;
- ອີງຕາມ ສະພາບການລັກຄ້າມະນຸດຢູ່ ສປປ ລາວ ກໍ່ຄືແຂວງອຸດົມໄຊ ມີລັກສະນະຮ້າຍແຮງ, ສັບສົນເພີ່ມຂຶ້ນເລື້ອຍໆ;
- ອີງຕາມ ໜັງສືສະເໜີຂອງກອງບັນຊາການ ປກສ ແຂວງອຸດົມໄຊ ສະບັບເລກທີ 6548/ປກສ.ອຊ, ລົງວັນທີ 17 ກໍລະກົດ 2023.

ແຂວງອຸດົມໄຊ ເປັນແຂວງໜຶ່ງຕັ້ງຢູ່ຈຸດໃຈກາງພາກເໜືອ ເປັນທາງຜ່ານໄປສູ່ບັນດາປະເທດໃກ້ຄຽງ ເຊັ່ນ: ສປຈີນ ສສ ຫວຽດນາມ, ຣາຊະອານາຈັກໄທ ແລະ ສະຫະພາບມຽນມ້າ. ຈາກຈຸດພິເສດດັ່ງກ່າວຈຶ່ງມີຊາວຕ່າງປະເທດເຂົ້າມາເຄື່ອນໄຫວເປັນຈໍານວນຫຼວງຫຼາຍ; ສະນັ້ນແຂວງອຸດົມໄຊ ຈຶ່ງໄດ້ຖືເອົາວຽກງານຕ້ານການຄ້າມະນຸດເປັນວຽກງານສໍາຄັນ ເພື່ອຮັບປະກັນໃຫ້ແກ່ວຽກງານດັ່ງກ່າວ ຈຶ່ງໄດ້ແຕ່ງຕັ້ງຄະນະກໍາມະການຂັ້ນແຂວງ, ຄະນະກໍາມະການຂັ້ນເມືອງ ແລະກອງເລຂາຊ່ວຍວຽກຂຶ້ນ ເພື່ອເຮັດວຽກງານໂຄສະນາປຸກຈິດສໍານຶກໃຫ້ແກ່ສັງຄົມ ດ້ວຍຫຼາຍຮູບແບບ, ຫຼາຍວິທີການ, ປະຕິບັດມາດຕະການທາງດ້ານກົດໝາຍຕໍ່ຜູ້ກະທໍາຜິດຢ່າງເຂັ້ມງວດ ແລະ ສາມາດປົກປ້ອງຕໍ່ຜູ້ຖືກເຄາະຮ້າຍ, ກຸ່ມສ່ຽງຈາກການຄ້າມະນຸດທັງພາຍໃນ ແລະ ຕ່າງປະເທດໄດ້ຈໍານວນໜຶ່ງ, ພ້ອມທັງໄດ້ຮ່ວມມືຢ່າງຈິງຈັງກັບບັນດາປະເທດເພື່ອນມິດ, ປະເທດບ້ານໃກ້ເຮືອນຄຽງ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ເຮັດໃຫ້ວຽກງານຄ້າມະນຸດເຄື່ອນໄຫວໄດ້ດີໃນໄລຍະຜ່ານມາ.

ຄຽງຄູ່ດ້ານດີນັ້ນ, ພວກກໍ່ອາຊະຍາກໍາຄ້າມະນຸດ ຍັງມີການເຄື່ອນໄຫວດ້ວຍຫຼາຍຮູບແບບ, ຫຼາຍວິທີການ, ມີເລ່ຫຼ່ຽມເຮັດໃຫ້ສະພາບການຄ້າມະນຸດເກີດຂຶ້ນໃນສັງຄົມ ໂດຍສະເພາະແຂວງອຸດົມໄຊ ເປັນຕົ້ນແມ່ນການຂູດຮີດທາງເພດການຂູດຮີດແຮງງານ, ການແຕ່ງດອງແອບແຝງ, ການຈ້າງໃຫ້ຖືພາແທນແບບບໍ່ຖືກຕ້ອງ, ການເຜີຍແຜ່ພາບສິ່ງລາມົກ ແລະ ອື່ນໆ, ພ້ອມນັ້ນການຈັດຕັ້ງປະຕິບັດວຽກງານປ້ອງກັນ, ວຽກງານການບັງຄັບໃຊ້ກົດໝາຍ ແລະ ການປົກປ້ອງ, ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຂອງບາງພະແນກການທີ່ກ່ຽວຂ້ອງ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ຍັງມີຜູ້ຕົກເປັນຜູ້ຖືກເຄາະຮ້າຍຈໍານວນໜຶ່ງ.

ຈາກສະພາບດັ່ງກ່າວ ໄດ້ສ້າງຜົນກະທົບ ແລະ ເປັນໄພອັນຕະລາຍ ຕໍ່ຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ; ຊີວິດ ແລະ ຊັບສິນຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດເວົ້າລວມ, ເວົ້າສະເພາະແມ່ນປະຊາຊົນແຂວງອຸດົມໄຊ ທີ່ຍັງກໍາລັງປະເຊີນໜ້າກັບບັນຫາທ້າທາຍດັ່ງກ່າວ.

## ເຈົ້າແຂວງອຸດົມໄຊ ອອກຄຳສັ່ງແນະນຳ:

1. ໃຫ້ບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ສອງກຳລັງ ປກຊ-ປກສ, ພະນັກງານລົງກໍ່ສ້າງຮາກຖານການເມືອງ ຂັ້ນແຂວງ-ຂັ້ນເມືອງ, ອົງການປົກຄອງບ້ານ ຕ້ອງເປັນເຈົ້າການໃນການສຶກສາອົບຮົມການເມືອງ-ນຳພາແນວຄິດ, ເຜີຍແຜ່ບັນດາລະບຽບ, ກົດໝາຍ, ມະຕິ, ຄຳສັ່ງຕ່າງໆ ຂອງຂັ້ນເທິງ ເປັນຕົ້ນແມ່ນກົດໝາຍວ່າດ້ວຍການຄ້າມະນຸດ, ໂຄສະນາຜົນຮ້າຍ ແລະຜົນກະທົບຂອງການຄ້າມະນຸດ ໃຫ້ປະຊາຊົນບັນດາເຜົ່າຮັບຮູ້ ເຂົ້າໃຈຢ່າງເລິກເຊິ່ງ ເພື່ອສະກັດກັ້ນບັນຫາປະກົດການຫຍໍ້ທໍ້ດ້ານການຄ້າມະນຸດໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວ;
2. ປະຊາຊົນບັນດາເຜົ່າທົ່ວແຂວງອຸດົມໄຊ ນັບແຕ່ຕົວເມືອງຮອດຊົນນະບົດ ຕ້ອງມີຄວາມຕື່ນຕົວ, ເປັນເຈົ້າການຕໍ່ແນວທາງ, ນະໂຍບາຍຂອງພັກ-ລັດ, ເຄົາລົບລະບຽບ-ກົດໝາຍ, ຮັກສາມູນເຊື້ອຮີດຄອງປະເພນີອັນດີງາມຂອງບັນດາເຜົ່າ, ຮູ້ຈຳແນກມິດສັດຕູໃຫ້ຈະແຈ້ງ ພ້ອມກັນເປັນເຈົ້າການໃນການຕິດຕາມກວດກາສະພາບຂອງພວກກຸ່ມຄົນບໍ່ດີ ໂດຍສະເພາະແມ່ນຄົນຕ່າງປະເທດທີ່ມາເຄື່ອນໄຫວຄ້າຂາຍ, ດຳເນີນທຸລະກິດ, ມາທ່ອງທ່ຽວ ,ເປັນກຳມະກອນ ແລະ ອື່ນໆ ຢູ່ພາຍໃນແຂວງອຸດົມໄຊ ຖ້າເຫັນວ່າມີສະພາບການເຄື່ອນໄຫວລັກລອບ, ຊື້ຈ້າງຈອບອອຍ, ຕົວະຍົວະຫຼອກລວງ, ຂໍເປັນແຟນ ຫຼື ຄົນຮັກ, ຂໍແຕ່ງດອງເປັນຜົວ-ເມຍ ກັບຄົນລາວ ແມ່ນໃຫ້ລາຍງານຕໍ່ການຈັດຕັ້ງບ້ານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢ່າງຮີບດ່ວນ ເພື່ອກວດກາ ແລະ ປະຕິບັດມາດຕະການທາງດ້ານກົດໝາຍຢ່າງເດັດຂາດ;
3. ສຸມໃສ່ຈັດຕັ້ງຜັນຂະຫຍາຍແຜນງານແຫ່ງຊາດ ວ່າດ້ວຍການຕ້ານການຄ້າມະນຸດ ໄລຍະ III ປີ 2021-2025 ໃຫ້ບັນລຸຄາດໝາຍ ເຊິ່ງຄະນະກຳມະການຕ້ານການຄ້າມະນຸດຂອງທຸກຂະແໜງການ ຕ້ອງຫັນແຜນງານດັ່ງກ່າວເປັນແຜນງານ, ໂຄງການ, ກິດຈະກຳຂັ້ນຂອງຕົນ; ກວດກາຄືນກົງຈັກການຈັດຕັ້ງ ລວມທັງການສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນທີ່ຮັບຜິດຊອບວຽກດັ່ງກ່າວ.
4. ສຸມໃສ່ແກ້ໄຂປະກົດການຫຍໍ້ທໍ້, ບັນຫາອາຊະຍາກຳຕ່າງໆຢູ່ບັນດາພື້ນທີ່ຫຼໍ່ແຫຼມທີ່ມີຄວາມສ່ຽງໃນການຄ້າມະນຸດ; ຄະນະກຳມະການຕ້ານການຄ້າມະນຸດ ຂັ້ນແຂວງ ຕ້ອງສົມທົບກັບຂັ້ນເມືອງ ໃຫ້ແໜ້ນໃນການແກ້ໄຂໃນທຸກກໍລະນີທີ່ເປັນການຄ້າມະນຸດ;

   ສະກັດກັ້ນ ແລະ ຕ້ານທຸກຮູບແບບກໍລະນີການໂຄສະນາຊວນເຊື່ອທາງສື່ສັງຄົມອອນລາຍດ້ວຍຮູບແບບການຕົວະຍົວະຫຼອກລວງເອົາຊາວໜຸ່ມ-ໄວໜຸ່ມ, ຍິງສາວ ທີ່ໄປເຮັດວຽກຢູ່ສາມລ່ຽມຄຳ ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ.
5. ສຸມໃສ່ວຽກງານໂຄສະນາປຸກຈິດສຳນຶກ ກ່ຽວກັບຄວາມສຳຄັນ ແລະ ຜົນຮ້າຍຂອງການຄ້າມະນຸດ ໂດຍຖືເອົາວຽກງານປ້ອງກັນ, ສະກັດກັ້ນເປັນຫຼັກ ເຮັດໃຫ້ວຽກງານດັ່ງກ່າວ ກາຍເປັນຄວາມຮັບຜິດຊອບຂອງທົ່ວສັງຄົມ;
6. ໃນໄລຍະຜ່ານມາ ຍັງເຫັນວ່າເກີດມີຊ່ອງຫວ່າງໃນການດຳເນີນຄະດີ ສ່ວນຫຼາຍແມ່ນສຶກສາອົບຮົມແກ້ໄຂທາງດ້ານບໍລິຫານ ບໍ່ໄດ້ຕັດສິນລົງໂທດຜູ້ກະທຳຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ, ເຮັດໃຫ້ຄະດີໜັກກາຍເປັນເບົາເຮັດໃຫ້ເປົ້າໝາຍ ບໍ່ໄດ້ປະຕິບັດໂທດຕາມການກະທຳຜິດ ແລະ ຍັງທ້າທາຍຕໍ່ລະບຽບກົດໝາຍ; ດັ່ງນັ້ນ, ຕ້ອງດຳເນີນຄະດີທີ່ກ່ຽວຂ້ອງກັບການຄ້າມະນຸດໃຫ້ເຂັ້ມງວດ, ເດັດຂາດ ແລະ ໂປ່ງໃສ; ແກ້ໃຫ້ໄດ້ບັນດາຫົວໂປ່ໂຕການ, ສາຍໃຍ ແລະ ເຄືອຄ່າຍການກໍ່ອາຊະຍາກຳ; ການແກ້ໄຂຕ້ອງສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ຖືກຕ້ອງຕາມຄວາມເປັນຈິງ;
7. ກ່ຽວກັບບຸກຄົນ, ນິຕິບຸກຄົນ ທີ່ເປັນຄົນລາວ ແລະຕ່າງປະເທດ ທີ່ມີການເຄື່ອນໄຫວ, ປຸກລະດົມຂົນຂວາຍ, ໂຄສະນາຊວນເຊື່ອ, ຕົວະຍົວະ, ຫຼອກລວງທີ່ຜິດຕໍ່ລະບຽບ, ກົດໝາຍ ຈະຕ້ອງໄດ້ດຳເນີນຕາມປະມວນກົດໝາຍອາຍາ, ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017, ມາດຕາ **215** ການຄ້າມະນຸດ;

8. ພະແນກແຮງງານ ແລະສະຫວັດດີການສັງຄົມ, ສະຫະພັນແມ່ຍິງ, ສະຫະພັນກຳມະບານ, ພະແນກສາທາລະນະສຸກ ຕ້ອງປະສານສົມທົບກັນຢ່າງແໜ້ນແຟ້ນ ໃນການປົກປ້ອງ, ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ກຸ່ມສ່ຽງ ໂດຍສະເພາະການບຳບັດພື້ນຟູຈິດໃຈ, ຊ່ວຍຝຶກອົບຮົມວິຊາຊີບ, ຊອກວຽກເຮັດງານທຳ ກ່ອນນຳສົ່ງຄືນສູ່ຄອບຄົວ ແລະ ສັງຄົມ ເພື່ອບໍ່ໃຫ້ເຂົາເຈົ້າຕົກເປັນຜູ້ຖືກເຄາະຮ້າຍອີກ;

9. ບົດຮຽນໃນການແກ້ໄຂບັນຫາທີ່ກ່ຽວຂ້ອງກັບການຄ້າມະນຸດໃນໄລຍະຜ່ານມາ ຍ້ອນພວກເຮົາມີການປະສານສົມທົບ; ທຸກຂະແໜງການ ເຫັນໄດ້ຄວາມສຳຄັນ, ເຫັນໄດ້ພາລະບົດບາດ ຈຶ່ງສາມາດສະກັດກັ້ນ ແລະ ແກ້ໄຂບັນຫາດັ່ງກ່າວໄດ້; ສະນັ້ນ, ໃຫ້ບັນດາພະແນກການກ່ຽວຂ້ອງ ເອົາໃຈໃສ່ປະສານສົມທົບຕາມຂະແໜງການສາຍຕັ້ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການຄ້າມະນຸດ;

10. ບັນຫາການຄ້າມະນຸດເປັນອາຊະຍາກຳຂ້າມຊາດ; ສະນັ້ນຕ້ອງເຮັດວຽກງານປະສານສົມທົບ ໂດຍສະເພາະປະເທດໃກ້ຄຽງທີ່ມີຊາຍແດນຕິດຈອດເພື່ອຮ່ວມມືປົກປ້ອງ, ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃຫ້ທ່ວງທັນ ແລະປອດໄພ;

11. ໃຫ້ຄະນະກຳມະການຕ້ານການຄ້າມະນຸດ ຂັ້ນແຂວງ, ຂັ້ນເມືອງຈັດພິທີລະນຶກ ວັນສາກົນຕ້ານການຄ້າມະນຸດໃນວັນທີ 30 ກໍລະກົດ ຂອງທຸກໆປີ ໃຫ້ມີມ່ວນຊົນເຂົ້າຮ່ວມຢ່າງກ້ວາງຂວາງ ແລະເປັນຂະບວນຟົດຟື້ນ;

12. ຄະນະກຳມະການຕ້ານການຄ້າມະນຸດແຕ່ລະຂັ້ນນັບທັງຂັ້ນແຂວງ ແລະ ຂັ້ນເມືອງ ເອົາໃຈໃສ່ຄົ້ນຄ້ວາ ແລະຕອບສະໜອງງົບປະມານໃຫ້ການເຄື່ອນໄຫວວຽກງານຕ້ານການຄ້າມະນຸດຢູ່ໃນຂົງເຂດຂອງຕົນຢ່າງເໝາະສົມ (ຕາມຄຳສັ່ງແນະນຳ ສະບັບເລກທີ 044/ຄຕມຊ, ລົງວັນທີ 25 ກໍລະກົດ 2018);

13. ມອບໃຫ້ສອງກອງບັນຊາການ ປກຊ-ປກສ , ພະແນກການທີ່ກ່ຽວຂ້ອງ, ເຈົ້າເມືອງ 07 ເມືອງ, ອົງການປົກຄອງບ້ານ ຈົ່ງຊີ້ນຳບັນດາຂະແໜງການທີ່ກ່ຽວຂ້ອງຂອງຕົນ ຜັນຂະຫຍາຍເນື້ອໃນວຽກງານດັ່ງກ່າວ ເຂົ້າໃນແຜນງານ, ແຜນການເຄື່ອນໄຫວປະຈຳເດືອນ, ປະຈຳປີຂອງຕົນ ແລ້ວພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ມີການສະຫຼຸບລາຍງານເປັນແຕ່ລະໄລຍະ, ຫາກພົບຂໍ້ຫຍຸ້ງຍາກປະການໃດກໍ່ໃຫ້ສະເໜີລາຍງານຂໍທິດຊີ້ນຳຈາກຄະນະກຳມະການຕ້ານການຄ້າມະນຸດແຂວງເພື່ອມີທິດຊີ້ນຳ.

14. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນຄຳສັ່ງສະບັບເລກທີ 2026/ຈຂ, ລົງວັນທີ 15 ທັນວາ 2018.

**ເຈົ້າແຂວງອຸດົມໄຊ**

ບຸນຄົງ ຫຼ້າຈຽມພອນ